ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----------------------------

ກະຊວງການເງິນ
ກົມພາສີ

ເລກທີ06068 /ກພສ
ນະຄອນຫຼວງວຽງຈັນ, ວັນທີ 27 AUG 2014

## ແຈ້ງການແນະນຳ

ເຖິງ: ທ່ານ ຫົວໜ້າດ່ານພາສີສາກົນ ໃນທົ່ວປະເທດ.

ເລື່ອງ: ການນຳເອົາວັດຖຸ, ສິນຄ້າ ເຄື່ອງຂອງສິ່ງຂອງເຂົ້າມາປຸງແຕ່ງ, ດັດແປງ ປະກອບເປັນ ຜະລິດຕະພັນສຳເລັດຮູບ, ເຄິ່ງສຳເລັດຮູບ ແລ້ວນຳອອກຄືນ.

- ອີງຕາມກົດໝາຍວ່າດ້ວຍພາສີ ເລກທີ04/ສພຊ. ລົງວັນທີ20/12/2011.

ໄລຍະຜ່ານມາສັງເກດເຫັນວ່າ ການນຳເຂົ້າສິນຄ້າເພື່ອມາປຸງແຕ່ງ ຫຼື ດັດແປງ(ໃໝ່) ແລ້ວສົ່ງອອກຄືນ ມີທັງສົ່ງອອກແລ້ວ ບໍ່ຖືກກັບຄວາມຕ້ອງການຂອງລູກຄ້າຢູ່ຕ່າງປະເທດ ແລ້ວ ຖືກສົ່ງກັບເພື່ອປຸງແຕ່ງໃໝ່ ແລະ ນຳເຂົ້າເພື່ອປຸງແຕ່ງສະເພາະ ແລ້ວສົ່ງອອກຕ່າງປະເທດ ຍັງບໍ່ທັນມີຄວາມເປັນເອກະພາບໃນການປະຕິບັດຕົວຈິງໃນຂອບເຂດທົ່ວປະເທດ. ສະນັ້ນ, ເພື່ອໃຫ້ການປະຕິບັດວຽກງານດັ່ງກ່າວ ຖືກຕ້ອງກັບຄວາມເປັນຈິງ ແລະ ສອດຄ່ອງກັບລະບຽບກົດໝາຍ.

**ກົມພາສີ ຈຶ່ງອອກແຈ້ງການແນະນຳ ດັ່ງນີ້:**

1) ການນຳເອົາວັດຖຸດິບ ຫຼື ວັດຖຸເຄິ່ງສຳເລັດຮູບ,ສິນຄ້າ ເຄື່ອງຂອງສຳເລັດຮູບ ເຂົ້າມາໃນ ສ ປ ປລາວ ເພື່ອທຳການຜະລິດ, ປຸງແຕ່ງ, ດັດແປງປະກອບເປັນຜະລິດຕະພັນສຳເລັດຮູບ, ເຄິ່ງສຳເລັດຮູບ ແລ້ວສົ່ງອອກ, ຜູ້ນຳເຂົ້າຕ້ອງປະກອບໃບແຈ້ງພາສີເປັນລາຍລະອຽດຕາມລະບອບການນຳເຂົ້າຊົ່ວຄາວ( **ບໍ50, ບໍ 52 ...** ) ຕ້ອງມີແຜນນຳເຂົ້າ ຫຼື ສູດການຜະລິດ ທີ່ໄດ້ຮັບອະນຸຍາດຈາກຂະແໜງກ່ຽວຂ້ອງ ສະເໜີຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານ ແລະ ເຮັດບົດບັນທຶກຄ້ຳປະກັນດ້ວຍເງິນສົດ120% ຫຼື ໜັງສືຄ້ຳປະກັນຈາກສະຖາບັນການເງິນ, ທະນາຄານ ຕາມມາດຕາ27 ຂອງກົດໝາຍວ່າດ້ວຍພາສີ.
2) ການນຳເຂົ້າເພື່ອມາປຸງແຕ່ງເພື່ອສົ່ງອອກ ຈະໄດ້ຮັບການງົດເກັບພາສີ ແລະ ພັນທະອື່ນ, ໃນເບື້ອງຕົ້ນເຈົ້າໜ້າທີ່ພາສີຈະອະນຸຍາດໃຫ້ໃນກຳນົດ06ເດືອນ ແລະ ຢູ່ພາຍໃຕ້ການຄຸ້ມຄອງ ຕິດຕາມຂອງເຈົ້າໜ້າທີ່ພາສີ, ພາຍໃນກຳນົດ06ເດືອນ ຖ້າບໍ່ສາມາດສົ່ງອອກທັນຕາມກຳນົດ ກ່ອນ01ເດືອນຕ້ອງມາແຈ້ງຕໍ່ເຈົ້າໜ້າທີ່ໃຫ້ຊາບລ່ວງໜ້າ ແລະ ສາມາດຕໍ່ໄດ້ອີກ03ເດືອນ ແຕ່ບໍ່ເກີນ01ປີ, ຖ້າຄົບ03ເດືອນ ເມື່ອຜະລິດຕະພັນຖືກສົ່ງອອກຈາກ ສ ປ ປ ລາວແລ້ວ ເງິນທີ່ໄດ້ຄ້ຳປະກັນໄວ້(ໃນເວລານຳເຂົ້າເບື້ອງຕົ້ນ) ຈະຖືກໄລ່ລຽງສົ່ງຄືນຕາມຈຳນວນຕົວຈິງ.

3) ໃນກໍລະນີຄົບກໍານົດຕາມທີ່ໄດ້ຕໍ່ອາຍຸການຜະລິດໃຫ້ ແຕ່ຍັງບໍ່ສາມາດສົ່ງອອກໄດ້ ຜະລິດຕະພັນດັ່ງກ່າວຈະຕ້ອງຖືກເສັຍພາສີ-ອາກອນນໍາເຂົ້າຕາມລະບຽບການ ແລະ ເງິນຄໍ້າປະກັນຈະມອບເຂົ້າງົບປະມານເປັນລາຍຮັບຂອງພາສີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງດ່ານເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ກົມພາສີ

... ພະພັງທອງ ສີພັນດອນ

...nsaphangthong SIPHANDONE